ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານປະທານປະເທດ
ກົມບໍລິຫານ ແລະ ການເງິນ

ເລກທີ 249 / ຫສປທ.ບກ

ນະຄອນຫຼວງວຽງຈັນ,ວັນທີ 19 / 5 / 2023

## ເງື່ອນໄຂຂອງບໍລິສັດ ທີ່ຈະເຂົ້າຮ່ວມການປະມູນ
## ສຳລັບການບໍລິການທີ່ປຶກສາ ຕິດຕາມໂຄງການ ສ້ອມແປງໃຫຍ່ ອາຄານຫໍຄຳ (ທຳນຽບປະທານປະເທດ)

1. ຫ້ອງວ່າການສຳນັກງານປະທານປະເທດ ( ຫສປທ ) ໄດ້ຮັບອະນຸມັດງົບປະມານແຫ່ງລັດ ປະຈຳປີ 2023 – 2027 ເພື່ອຈັດຈ້າງບໍລິສັດທີ່ປຶກສາ ຕິດຕາມໂຄງການ ສ້ອມແປງໃຫຍ່ ອາຄານຫໍຄຳ.
2. ການບໍລິການທີ່ປຶກສາ ຕິດຕາມໂຄງການ ສ້ອມແປງໃຫຍ່ ອາຄານຫໍຄຳ ລວມເອົາການສະໜອງ ທີມງານຂອງບໍລິສັດທີ່ປຶກສາທີ່ປະຕິບັດ ຕິດຕາມໂຄງການ ກໍ່ສ້າງສ້ອມແປງໃຫຍ່ ອາຄານຫໍຄຳ.
3. ສຳລັບໜ້າວຽກລະອຽດ ( TOR ) ທີ່ຈະມອບໝາຍ ສາມາດຫາໃນເວັບໄຊ້ ຂອງ ຫສປທ : www.po.gov.la ແລະ ຄັດຕິດໃນເອກະສານປະມູນ.
4. ຊອງປະມູນ ສາມາດຊື້ໄດ້ທີ່ ພະແນກເຄຫາສະຖານ, ກົມບໍລິຫານ ແລະ ການເງິນ, ຫສປທ, ໂທ 021 252579 ໃນລາຄາ 3.000.000 ກີບ/ຊຸດ ( ສາມລ້ານກີບ ). ເງິນດັ່ງກ່າວຈະບໍ່ໄດ້ສົ່ງຄືນ.
5. ຂໍເຊີນບັນດາ ບໍລິສັດ "ທີ່ປຶກສາ" ທີ່ມີຄວາມສົນໃຈສາມາດ ແຈ້ງເຈດຈຳນົງ ເພື່ອສະໜອງການບໍລິການດັ່ງກ່າວ, ພ້ອມທັງສະໜອງຂໍ້ມູນ ທີ່ສະແດງເຖິງການສະໜອງການບໍລິການ ທີ່ມີຄຸນວຸທິ ແລະມີປະສົບການທີ່ກ່ຽວຂ້ອງໃນການປະຕິບັດການບໍລິການດັ່ງກ່າວ ມີດັ່ງນີ້ :
   - 5.1. ຕ້ອງເປັນບໍລິສັດ ທີ່ຖືກຕ້ອງຕາມກົດໝາຍ ໃນການດຳເນີນງານ ກ່ຽວກັບການບໍລິການທີ່ປຶກສາ, ມີໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດ ຮອດປີ 2022, ເປັນບໍລິສັດອິດສະຫຼະ ແລະ ມີມາດຖານລະດັບຊາດ ຫຼື ສາກົນສຳລັບວຽກງານການບໍລິການທີ່ກ່ຽວຂ້ອງ.
   - 5.2. ມີໃບຢັ້ງຢືນການເສຍອາກອນປະຈຳປີ 2022.
   - 5.3. ມີປະສົບການທົ່ວໄປຢ່າງໜ້ອຍ 5 ປີ ກ່ຽວກັບການດຳເນີນການ ທີ່ປຶກສາໂຄງການກໍ່ສ້າງສ້ອມແປງ, ຖ້າມີປະສົບການ ໃນການບໍລິການ ໃນລະດັບສາກົນ ຍິ່ງເປັນການດີ.
   - 5.4. ສະແດງຫລັກຖານຄວາມສຳເລັດ ໃນການບໍລິການທີ່ປຶກສາຢ່າງໜ້ອຍ 03 ສັນຍາ ທີ່ພົວພັນກັບ ການບໍລິການ, ຕິດຕາມໂຄງການ ກໍ່ສ້າງສ້ອມແປງ, ໂດຍສະເພາະຫລັກຖານຄວາມສຳເລັດ ໃນການບໍລິການທີ່ປຶກສາພາຍໃນປະເທດ, ໃນກະຊວງຕ່າງໆ ຫຼື ໂຄງການຕ່າງປະເທດ ຍິ່ງເປັນການດີ.
   - 5.5. ສະໜອງໂຄງຮ່າງການຈັດຕັ້ງ, ຈຳນວນ ແລະ ລາຍຊື່ພະນັກງານຫລັກ ທີ່ເປັນຄົນຕ່າງປະເທດ ແລະ ຄົນພາຍໃນຂອງບໍລິສັດ
   - 5.6. ສະໜອງຊີລະປະຫວັດຂອງຜູ້ຊ່ຽວຊານຫລັກ ເພື່ອເປັນຂໍ້ມູນໃນຂະບວນການຄັດເລືອກ ເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ).
6. ບໍລິສັດຕ້ອງມີໃບຢັ້ງຢືນຖານະການເງິນຈາກທະນາຄານ ເພື່ອເປັນບ່ອນອີງໃນການພິຈາລະນາ ການຈັດຕັ້ງປະຕິບັດໂຄງການ; ມີການເຄື່ອນໄຫວບັນຊີຕໍ່ເນື່ອງຢ່າງໜ້ອຍ 3 ເດືອນ ແລະ ມີຍອດໃນບັນຊີຢ່າງໜ້ອຍ 10% ຂອງມູນຄ່າທີ່ປຶກສາທີ່ຕົນສະເໜີ.

7. ບໍລິສັດທີ່ເຂົ້າຮ່ວມການປະມູນໂຄງການ ຕ້ອງວາງເງິນຄໍ້າປະກັນການປະມູນ 2% ຂອງມູນຄ່າທີ່ຕົນເອງສະເໜີ. ໜັງສືຄໍ້າປະກັນການປະມູນຕ້ອງນຳໃຊ້ ແບບຟອມ ອອກໂດຍທະນາຄານ ແລະ ຕ້ອງໄດ້ວິຊາຈາກທະນາຄານ.
8. ບໍລິສັດທີ່ຊະນະການປະມູນ ຕ້ອງມອບເງິນຄໍ້າປະກັນສັນຍາ ຂອງໂຄງການ 10% ຂອງມູນຄ່າລວມທີ່ຕົນເອງສະເໜີ ຕາມລະບຽບກົດໝາຍ ( ກໍລະນີຊະນະການປະມູນ ແລະ ໄດ້ເຊັນສັນຍາ ).
9. ບໍລິສັດທີ່ປຶກສາຈະຖືກຄັດເລືອກ ຕາມຫຼັກການຈັດຊື້ຈັດຈ້າງ ສຳລັບງົບປະມານຂອງລັດ ຕາມທີ່ກຳນົດໄວ້ ໃນຄຳແນະນຳເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
10. ບໍລິສັດບໍ່ມີສິດຂາຍໂຄງການໃຫ້ບໍລິສັດອື່ນປະຕິບັດວຽກໄດ້, ຍົກເວັ້ນການຕົກລົງເຫັນດີ ຂອງເຈົ້າຂອງໂຄງການ.
11. ບໍລິສັດທີ່ປຶກສາທີ່ມີຄວາມສົນໃຈ ສາມາດຕິດຕໍ່ຊື້ຊອງປະມູນ ເລີ່ມແຕ່ວັນທີ 19 ພຶດສະພາ 2023 ເປັນຕົ້ນໄປ ໃນໂມງລັດຖະການ (8:30 ໂມງ ຫາ 16:00ໂມງ), ວັນຈັນ ເຖິງ ວັນສຸກ. ທີ່ ພະແນກເຄຫາສະຖານ ກົມບໍລິຫານ ແລະ ການເງິນ, ໂທ 021252579. ( ຜູ້ຮັບຜິດຊອບ ທ່ານ ພຸດພະຈັນ ສີລິວົງໄຊ, ເບີໂທ 020 55587617 )
12. ຊອງປະມູນຕ້ອງປິດໃຫ້ແໜ້ນໜາ ແລະ ສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 09 ມິຖຸນາ 2023, ທີ່ພະແນກເຄຫາສະຖານ, ກົມບໍລິຫານ ແລະ ການເງິນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະຖືກສົ່ງຄືນໂດຍບໍ່ມີການເປີດຊອງ.
13. ຊອງປະມູນຈະເປີດໃນເວລາ 09 : 00ໂມງ ຂອງວັນດຽວກັນ ( 09 ມິຖຸນາ 2023 ) ທີ່ຫ້ອງປະຊຸມຊັ້ນ 1 ຫສປທ, ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ.

ຫົວໜ້າກົມບໍລິຫານ ແລະ ການເງິນ

ເຈົ້າຂອງໂຄງການ

ກົມບໍລິຫານ ແລະ ການເງິນ

ລຳເງິນ ບູລົມມະວົງ